**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ກົມຊົນລະປະທານ

ເລກທີ 1672 /ຊປທ

ນະຄອນຫຼວງວຽງຈັນ, ວັນທີ 13 MAY 2026

# ໜັງສືແຈ້ງເຊີນປະມູນ

1. ກົມຊົນລະປະທານ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະ ທີ່ດຳເນີນກິດຈະການດ້ານທີ່ປຶກສາ ສຳຫຼວດ-ອອກແບບ ແລະ ກໍ່ສ້າງ ສ້ອມແປງຊົນລະປະທານ ເຂົ້າຮ່ວມປະມູນ ຈັດຊື້-ຈັດຈ້າງ ການສຶກສາ, ສຳຫຼວດ-ອອກແບບໂຄງການຊົນລະປະທານ ທີ່ໄດ້ຮັບອະນຸມັດງົບປະມານລົງທຶນຂອງລັດ ປະຈຳປີ 2026 ຈຳນວນ 3 ໂຄງການ ຄື: 1) ໂຄງການ ສຶກສາ ສຳຫຼວດ-ອອກແບບຊົນລະປະທານ ອ່າງເກັບນ້ຳ ນ້ຳເກິ່ງ ເມືອງຕົ້ນເຜີ້ງ ແຂວງບໍ່ແກ້ວ; 2) ໂຄງການ ສຶກສາ ສຳຫຼວດ-ອອກແບບຊົນລະປະທານ ນ້ຳໃຕ້ດິນນຳໃຊ້ພະລັງງານແສງຕາເວັນ ໃນພື້ນທີ່ແຫ້ງແລ້ງ ນະຄອນຫຼວງວຽງຈັນ; ແລະ 3) ໂຄງການ ສຶກສາ ສຳຫຼວດ-ອອກແບບຊົນລະປະທານ ອ່າງເກັບນ້ຳຫ້ວຍພື້ນ ເມືອງຄົງເຊໂດນ ແຂວງສາລະວັນ.
2. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະ ຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆ ບໍລິສັດທີ່ມີຄຸນນະວຸດທິເໝາະສົມ ແລະ ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍ ທີ່ກ່ຽວພັນກັບວຽກງານການສຳຫຼວດ-ອອກແບບຊົນລະປະທານ;
4. ບໍລິສັດ ທີ່ຕ້ອງການຊື້ເອກະສານປະມູນຄົບຊຸດເປັນພາສາລາວ ໄດ້ທີ່ພະແນກແຜນການ ແລະ ການຮ່ວມມື, ກົມຊົນລະປະທານ ຊັ້ນ 2, ບ້ານອານຸ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ເບີໂທ 020 5544 6691; 021 457 333, ຊຶ່ງຈະໄດ້ຂະຫຍາຍເວລາໃນການຂາຍຊອງປະມູນ, ເລີ່ມແຕ່ວັນທີ 13 ພຶດສະພາ 2026 ເຖິງ ວັນທີ 29 ພຶດສະພາ 2026 (ໃນໂມງລັດຖະການ);
5. ຊອງປະມູນ ໂຄງການ ສຶກສາ ສຳຫຼວດ-ອອກແບບຊົນລະປະທານ ອ່າງເກັບນ້ຳຫ້ວຍພື້ນ ເມືອງຄົງເຊໂດນ ແຂວງສາລະວັນ ຕ້ອງສົ່ງກ່ອນເວລາ 08:30 ໂມງ ຂອງວັນທີ 29/5/2026; 2) ຊອງປະມູນ ໂຄງການ ສຶກສາ ສຳຫຼວດ-ອອກແບບຊົນ ລະປະທານ ນ້ຳໃຕ້ດິນນຳໃຊ້ພະລັງງານແສງຕາເວັນ ໃນພື້ນທີ່ແຫ້ງແລ້ງ ນະຄອນຫຼວງວຽງຈັນ ຕ້ອງສົ່ງກ່ອນເວລາ 10:30 ໂມງ ຂອງວັນທີ 29/5/2026; ແລະ 3) ຊອງປະມູນໂຄງການ ສຶກສາ ສຳຫຼວດ-ອອກແບບຊົນລະ ປະທານ ອ່າງເກັບນ້ຳ ນ້ຳເກິ່ງ ເມືອງຕົ້ນເຜີ້ງ ແຂວງບໍ່ແກ້ວ ຕ້ອງສົ່ງກ່ອນເວລາ 13:30 ໂມງ ຂອງວັນທີ 29/5/2026 (ທີ່ຫ້ອງປະຊຸມກົມຊົນລະປະທານ ຊັ້ນ 2). ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງຈະໄດ້ເປີດໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນ.
6. ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄ້ຳປະກັນການປະມູນດ້ວຍກຽດ ຫຼື ໜັງສືຄ້ຳປະກັນການປະມູນຈາກທະນາຄານ ບໍ່ໃຫ້ຫຼຸດ 2% ຂອງມູນຄ່າທີ່ສະເໜີ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາບໍລິສັດ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນໃນຄັ້ງນີ້ດ້ວຍ.

**ຫົວໜ້າກົມ**

ປອ ຄຳພະຈັນ ວົງຊະນະ